ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1619 /ອຄ. ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2013

# ບົດແນະນຳ

## ກ່ຽວກັບການສ້າງຕັ້ງສາຂາ

## ຂອງວິສາຫະກິດ (ນິຕິບຸກຄົນ) ຢູ່ ສປປ ລາວ

- ອີງໃສ່ມາດຕາ 35 ຂອງກົດໝາຍວ່າດ້ວຍວິສາຫະກິດ, ເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005.

ເພື່ອໃຫ້ການສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກຄົນ) ຢູ່ ສປປ ລາວ ເປັນໄປຕາມບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ເປົ້າໝາຍທຸລະກິດທີ່ອະນຸຍາດໃຫ້ສ້າງຕັ້ງສາຂາ (ສຳລັບວິສາຫະກິດຂອງຕ່າງປະເທດ) ຮັບປະກັນການປົກປ້ອງສິດຜົນປະໂຫຍດ, ການປະຕິບັດພັນທະ ແລະ ຄວາມຮັບຜິດຊອບຂອງສາຂາ ໂດຍສະເພາະແມ່ນຂອງວິສາຫະກິດແມ່.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳລະອຽດເພີ່ມເຕີມ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດ ກ່ຽວກັບການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ດັ່ງນີ້:

ກ. ຫຼັກການທົ່ວໄປກ່ຽວກັບສາຂາຂອງວິສາຫະກິດ (ນິຕິບຸກຄົນ)

1. ສາຂາຂອງວິສາຫະກິດ (ນິຕິບຸກຄົນ) ແມ່ນສ່ວນໜຶ່ງໃນໂຄງປະກອບທຸລະກິດຂອງວິສາຫະກິດ ທີ່ສ້າງຕັ້ງສາຂານັ້ນໆ (ຕໍ່ໄປເອີ້ນຫຍໍ້ວ່າ: ວິສາຫະກິດແມ່) ບໍ່ມີຖານະນິຕິບຸກຄົນ ແຍກຕ່າງຫາກຈາກວິສາຫະກິດ ທີ່ສ້າງຕັ້ງສາຂາດັ່ງກ່າວ;

2. ວິສາຫະກິດແມ່ ຕ້ອງຮັບຜິດຊອບຕໍ່ທຸກການກະທຳຂອງສາຂາຂອງຕົນ ເໝືອນກັບການກະທຳຂອງຕົນເອງ ໝາຍວ່າການຮ້ອງຟ້ອງສາຂາຂອງນິຕິບຸກຄົນພາຍໃນ ຫລື ຕ່າງປະເທດ ຢູ່ ສປປ ລາວ ໃຫ້ ຖືວ່າເປັນ ການຮ້ອງຟ້ອງນິຕິບຸກຄົນນັ້ນ ເວັ້ນເສັຍແຕ່ການກະທຳທີ່ລະບຽບ ກົດໝາຍກຳນົດເປັນຢ່າງອື່ນ;

3. ການເຄື່ອນໄຫວຂອງສາຂາ ຕ້ອງຢູ່ໃນຂອບເຂດທີ່ວິສາຫະກິດແມ່ມອບໝາຍໃຫ້ ແລະ ການມອບໝາຍນີ້ ຕ້ອງເຮັດເປັນລາຍລັກອັກສອນ ແລະ ຕ້ອງບໍ່ເກີນຂອບເຂດສິດ ໜ້າທີ່ຂອງວິສາຫະກິດແມ່.

ຂ. ການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ພາຍໃນປະເທດ

1. ການສ້າງຕັ້ງສາຂາ ຂອງວິສາຫະກິດ ຈະປະຕິບັດໄດ້ ກໍຕໍ່ເມື່ອ:

- ເປັນວິສາຫະກິດ (ນິຕິບຸກຄົນ);
- ໄດ້ລະບຸໄວ້ໃນກົດລະບຽບຂອງວິສາຫະກິດ (ນິຕິບຸກຄົນ).

2. ວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດຢູ່ ສປປ ລາວ ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອສ້າງຕັ້ງສາຂາ ແຕ່, ວິສາຫະກິດແມ່ຕ້ອງແຈ້ງກ່ຽວກັບການສ້າງຕັ້ງສາຂານັ້ນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຢູ່ບ່ອນທີ່ກ່ຽວຂ້ອງຊາບ ເພື່ອລົງທະບຽນຄຸ້ມຄອງ ແລະ ຕິດຕາມ. ໃນການແຈ້ງດັ່ງກ່າວຕ້ອງປະກອບດ້ວຍ:

- ສຳເນົາໃບທະບຽນວິສາຫະກິດ ແລະ ກົດລະບຽບຂອງວິສາຫະກິດແມ່;
- ໃບມອບສິດ ແລະ ຄວາມຮັບຜິດຊອບຂອງວິສາຫະກິດແມ່ ໃຫ້ສາຂາ;
- ເອກະສານແຈ້ງລະອຽດກ່ຽວກັບປະຫວັດຫຍໍ້ຂອງຄະນະສາຂາທຸກຄົນ; ໃນກໍລະນີຈ້າງຄົນຕ່າງປະເທດ ຕ້ອງຜ່ານຂັ້ນຕອນການພິຈາລະນາ ຕາມລະບຽບ ກົດໝາຍໃຫ້ຖືກຕ້ອງ;
- ຮູບ 3x4 ຂອງຫົວໜ້າສາຂາ 1 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ).

3. ການສ້າງຕັ້ງສາຂາໃໝ່ ນອກຈາກທີ່ບົ່ງໄວ້ໃນໃບທະບຽນວິສາຫະກິດ ຫຼື ການຍຸບເລີກ ຕ້ອງສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດໃໝ່ ຕາມຂັ້ນຕອນທີ່ບົ່ງໄວ້ໃນກົດໝາຍວິສາຫະກິດ ທຸກປະການ;

4. ເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ວິສາຫະກິດໃດ ມີສິດໃນການອອກໃບອະນຸຍາດຄວັດກາປະທັບໃຫ້ແກ່ (ສາຂາ) ຂອງວິສາຫະກິດ ນັ້ນ;

5. ໃນການອອກໃບອະນຸຍາດຄັວດກາປະທັບນັ້ນ ວິສາຫະກິດ ທີ່ສ້າງຕັ້ງສາຂາ ຕ້ອງນຳເອົາໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາຂອງຕົນ ຈາກພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ (ຖ້າໄດ້ມອບ) ທີ່ກ່ຽວຂ້ອງ ບ່ອນຊຶ່ງສາຂາຕັ້ງຢູ່ ມາແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອເປັນບ່ອນອີງໃນການອອກໃບອະນຸຍາດຄວັດກາປະທັບໃຫ້;

6. ຜູ້ເປັນເຈົ້າຂອງວິສາຫະກິດສ່ວນບຸກຄົນ ສາມາດຂະຫຍາຍທຸລະກິດຂອງຕົນໄດ້ ໂດຍການສ້າງຕັ້ງວິສາຫະກິດສ່ວນບຸກຄົນໃໝ່ ເຊັ່ນ: ຮ້ານເຈົ້າເກົ່າໜຶ່ງ, ຮ້ານເຈົ້າເກົ່າສອງ. ວິສາຫະກິດສ່ວນບຸກຄົນ ບໍ່ສາມາດ ສ້າງຕັ້ງສາຂາໄດ້.

ຄ. ການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ

1. ວິສາຫະກິດ (ນິຕິບຸກຄົນ) ຂອງຕ່າງປະເທດທີ່ດຳເນີນທຸລະກິດ ດ້ານ: 1) ທະນາຄານ ຫຼື ສະຖາບັນການເງິນ; 2) ການປະກັນໄພ; 3) ທີ່ປຶກສາສາກົນ ແລະ ການບິນຕ່າງປະເທດ ສາມາດຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສ້າງຕັ້ງສາຂາຢູ່ ສປປ ລາວ. ການສ້າງຕັ້ງສາຂາດ້ານອື່ນ ຈະປະກາດໃນລະບຽບການຕ່າງຫາກ (ເມື່ອມີຄວາມຈຳເປັນ).

2. ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດຕ້ອງຂໍເລກປະຈຳຕົວຜູ້ເສຍອາກອນ, ປະຕິບັດພັນທະ ແລະ ລະບຽບ ກົດໝາຍຕ່າງໆທີ່ກ່ຽວຂ້ອງຂອງ ສປປ ລາວ ເຊັ່ນດຽວກັບວິສາຫະກິດທົ່ວໄປ ຢ່າງເຂັ້ມງວດ;

3. ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ ຕ້ອງປະກອບດ້ວຍ:

- ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ (ຕາມແບບຟອມຄັດຕິດມາພ້ອມນີ້);
- ສຳເນົາໃບທະບຽນວິສາຫະກິດ - ສະບັບເປັນພາສາລາວ;
- ສຳເນົາກົດລະບຽບຂອງວິສາຫະກິດແມ່ - ສະບັບເປັນພາສາລາວ;
- ໃບມອບສິດ ແລະ ຄວາມຮັບຜິດຊອບຂອງວິສາຫະກິດແມ່ ໃຫ້ສາຂາ-ສະບັບເປັນພາສາລາວ;
- ຮູບຫົວໜ້າສາຂາ (3X4) ຈຳນວນ 3 ໃບ (ຮູບຖ່າຍບໍ່ເກີນ 3 ເດືອນ);
- ເອກະສານອື່ນໆ ຕາມທີ່ຂະແໜງການກ່ຽວຂ້ອງກຳນົດ (ຖ້າມີ).

## ງ. ການຈັດຕັ້ງປະຕິບັດບົດແນະນຳ

1. ເພື່ອຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຕ້ອງປະສານກັບພາກສ່ວນທີ່ກ່ຽວຂ້ອງຢ່າງໃກ້ຊິດ ພ້ອມທັງຊີ້ນຳພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມລະບຽບການ. ໃນເວລາຈັດຕັ້ງປະຕິບັດຫາກພົບບັນຫາ ໃຫ້ລາຍງານຂໍທິດຊີ້ນຳຢ່າງເປັນປະຈຳຈາກຂັ້ນເທິງ;

2. ບົດແນະນຳສະບັບນີ້ ປ່ຽນແທນ ບົດແນະນຳ, ສະບັບເລກທີ 0368/ອຄ. ສລທ, ລົງວັນທີ 21 ກຸມພາ 2012 ແລະ ແຈ້ງການ, ສະບັບເລກທີ 2008/ອຄ.ສລທ, ລົງວັນທີ 19 ກັນຍາ 2012, ເລື່ອງ: ຄຳແນະນຳເພີ່ມເຕີມແຈ້ງການ (ເລກທີ 0458 /ອຄ.ສລທ,) ແລະ ບົດແນະນຳ (ເລກທີ 368/ອຄ.ສລທ).

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ**

ດຣ.ນາມ ວິຍະເກດ

ຄັດຕິດມາພ້ອມນີ້ :

- ແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກຄົນ)ຕ່າງປະເທດ